ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ (ທົບທວນຄືນ)

ສຳລັບໄລຍະສາມເດືອນ ຂອງໄຕມາດທີສາມ ສິ້ນສຸດວັນທີ 30 ກັນຍາ 2026

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ (ທົບທວນຄືນ)
ສຳລັບໄລຍະສາມເດືອນ ຂອງໄຕມາດທີສາມ ທີ່ສິ້ນສຸດວັນທີ 30 ກັນຍາ 2026

	ໜ້າ
ໃບລາຍງານຖານະການເງິນ	1 - 2
ໃບລາຍງານຜົນໄດ້ຮັບ	3
ໃບລາຍງານສ່ວນປ່ຽນແປງທຶນ	4
ໃບລາຍງານກະແສເງິນສົດ	5
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້	6 - 14

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 30 ກັນຍາ 2026

	ບິດ ອະທິບາຍ	ທີ່ບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	6	5, 966, 620, 660	7, 558, 247, 285
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ	7	13, 660, 176, 775	12, 623, 318, 902
ຊັບສິນໝຸນວຽນອື່ນໆ		329, 008, 776	255, 196, 782
ລວມຊັບສິນໝຸນວຽນ		19, 955, 806, 211	20, 436, 762, 969
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ, ສຸດທິ	8	329, 330, 743, 798	324, 424, 000, 000
ຊັບສິນຄົງທີ່, ເຄື່ອງຈັກ ແລະ ອຸປະກອນ	9	-	22, 969, 703
ລວມຊັບສິນບໍ່ໝຸນວຽນ		329, 330, 743, 798	324, 446, 969, 703
ລວມຊັບສິນ		349, 286, 550, 009	344, 883, 732, 672

ທ່ານ ໂຫຼວ ສ່ຽວຕົ໋ງ
ຜູ້ຈັດການຝ່າຍການເງິນ

ວັນທີ: 12 ພະຈິກ 2026

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫ້ວ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 12 ພະຈິກ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 6 ເຖິງ 14 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 30 ກັນຍາ 2026

	ບິດ ອະທິບາຍ	ທົບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ	10	10, 098, 014, 215	13, 427, 872, 040
ລວມໜີ້ສິນໝຸນວຽນ		**10, 098, 014, 215**	**13, 427, 872, 040**
ໜີ້ສິນບໍ່ໝຸນວຽນ			
ອາກອນໜີ້ສິນເຍື່ອນຊໍາລະ	13	41, 401, 701, 760	39, 637, 855, 471
ລວມໜີ້ສິນບໍ່ໝຸນວຽນ		**41, 401, 701, 760**	**39, 637, 855, 471**
ລວມໜີ້ສິນ		**51, 499, 715, 975**	**53, 065, 727, 511**
ທຶນ			
ທຶນຈົດທະບຽນ	11	147, 199, 900, 000	147, 199, 900, 000
ສ່ວນເພີ່ມມູນຄ່າຮຸ້ນ		2, 559, 995, 000	2, 559, 995, 000
ຄັງແຮຕາມລະບຽບການ		7, 163, 503, 055	7, 163, 503, 055
ຄັງແຮເພື່ອຂະຫຍາຍທຸລະກິດ		7, 163, 503, 055	7, 163, 503, 055
ກໍາໄລສະສົມ		133, 699, 932, 924	127, 731, 104, 051
ລວມທຶນ		**297, 786, 834, 034**	**291, 818, 005, 161**
ລວມໜີ້ສິນ ແລະ ທຶນ		**349, 286, 550, 009**	**344, 883, 732, 672**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 12 ພະຈິກ 2026

ທ່ານ ຫ ຊຸນລິນ
ປະທານບໍລິສັດ

ວັນທີ: 12 ພະຈິກ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 6 ເຖິງ 14 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະສາມເດືອນ ຂອງໄຕມາດທີສາມ ທີ່ສິ້ນສຸດວັນທີ 30 ກັນຍາ 2026

	ບິດ ອະທິບາຍ	ທົບທວນຄືນ 1 ກໍລະກົດ - 30 ກັນຍາ 2026 ກີບ	ທົບທວນຄືນ 1 ກໍລະກົດ - 30 ກັນຍາ 2025 ກີບ
ລາຍຮັບຈາກການບໍລິການ		6, 017, 352, 424	5, 351, 855, 286
ຕົ້ນທຶນຈາກການບໍລິການ		(1, 572, 700, 092)	(997, 699, 138)
ກຳໄລຂັ້ນຕົ້ນ		**4, 444, 652, 332**	**4, 354, 156, 148**
ລາຍຮັບອື່ນໆ		7, 758, 159	4, 344, 446
ລາຍຈ່າຍໃນການຂາຍ		(1, 125, 000, 000)	(1, 125, 000, 000)
ລາຍຈ່າຍບໍລິຫານ		(428, 519, 000)	(410, 985, 764)
ກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ		(86, 165, 222)	582, 689, 542
ກຳໄລກ່ອນຫັກອາກອນກຳໄລ		**2, 812, 726, 269**	**3, 405, 204, 372**
ອາກອນກຳໄລ	13	(528, 166, 165)	(681, 040, 874)
ກຳໄລສຸດທິສຳລັບໄລຍະ		**2, 284, 560, 104**	**2, 724, 163, 498**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	14	15. 52	18. 51

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 12 ພະຈິກ 2026

ທ່ານ ... ຊຸມລິນ
ປະທານສະພາບໍລິຫານ

ວັນທີ: 12 ພະຈິກ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 6 ເຖິງ 14 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບໄລຍະສາມເດືອນ ຂອງໄຕມາດທີສາມ ທີ່ສິ້ນສຸດວັນທີ 30 ກັນຍາ 2026

	ຍັດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ຄັງແຮຕາມ ລະບຽບການ ກີບ	ຄັງແຮເພື່ອຂະຫຍາຍ ທຸລະກິດ ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫຼືອໃນວັນທີ 01 ກໍລະກົດ 2025 - ທຶນຫວນຄືນ		147, 199, 900, 000	2, 559, 995, 000	6, 196, 231, 071	6, 196, 231, 071	128, 685, 294, 212	290, 837, 651, 354
ກຳໄລສຸດທິສຳລັບໄລຍະ		–	–	–	–	2, 724, 163, 498	2, 724, 163, 498
ຍອດເຫຼືອໃນວັນທີ 30 ກັນຍາ 2025 - ທຶນຫວນຄືນ		**147, 199, 900, 000**	**2, 559, 995, 000**	**6, 196, 231, 071**	**6, 196, 231, 071**	**131, 409, 457, 710**	**293, 561, 814, 852**
ຍອດເຫຼືອໃນວັນທີ 01 ກໍລະກົດ 2026 - ທຶນຫວນຄືນ		147, 199, 900, 000	2, 559, 995, 000	7, 163, 503, 055	7, 163, 503, 055	131, 415, 372, 820	295, 502, 273, 930
ກຳໄລສຸດທິສຳລັບໄລຍະ		–	–	–	–	2, 284, 560, 104	2, 284, 560, 104
ຍອດເຫຼືອໃນວັນທີ 30 ກັນຍາ 2026 – ທຶນຫວນຄືນ		**147, 199, 900, 000**	**2, 559, 995, 000**	**7, 163, 503, 055**	**7, 163, 503, 055**	**133, 699, 932, 924**	**297, 786, 834, 034**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 12 ພະຈິກ 2026

ນ. ຊຸນລິນ
ຜູ້ຕາງໜ້າສະພາບໍລິຫານ

ວັນທີ: 12 ພະຈິກ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 6 ເຖິງ 14 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທຶນຫວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີສາມ ທີ່ສິ້ນສຸດວັນທີ 30 ກັນຍາ 2026

	ບົດອະທິບາຍ	ທົບທວນຄືນ 1 ກໍລະກົດ - 30 ກັນຍາ 2026 ກີບ	ທົບທວນຄືນ 1 ກໍລະກົດ - 30 ກັນຍາ 2025 ກີບ
ກະແສເງິນສົດຈາກການດຳເນີນງານ:			
ກຳໄລກ່ອນຫັກອາກອນກຳໄລສຳລັບໄລຍະ		2, 812, 726, 269	3, 405, 204, 372
ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ:			
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	9	–	24, 006, 022
ລາຍຮັບດອກເບ້ຍ		(7, 758, 159)	(4, 344, 446)
ຂາດທຶນ/(ກຳໄລ)ຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		87, 542, 315	(214, 969, 658)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງເງິນທຶນໝຸນວຽນ		**2, 892, 510, 425**	**3, 209, 896, 290**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ		3, 198, 280, 820	(235, 320, 815)
ຊັບສິນໝຸນວຽນອື່ນໆ		360, 625, 741	40, 734, 515
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ		(3, 428, 494, 870)	(1, 607, 045, 137)
ກະແສເງິນສົດທີ່ເກີດຈາກ ການດຳເນີນງານ		**3, 022, 922, 116**	**1, 408, 264, 853**
ດອກເບ້ຍທີ່ໄດ້ຮັບ		7, 758, 159	4, 344, 446
ກະແສເງິນສົດສຸດທິທີ່ເກີດຈາກ ກິດຈະກຳການດຳເນີນງານ		**3, 030, 680, 275**	**1, 412, 609, 299**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ການໄດ້ມາຂອງຊັບສິນເພື່ອການລົງທຶນ	8	(4, 906, 743, 798)	–
ເງິນສົດສຸດທິທີ່ນຳໃຊ້ ກິດຈະກຳລົງທຶນ		**(4, 906, 743, 798)**	–
ເພີ່ມຂຶ້ນ ສຸດທິໃນເງິນສົດ ແລະ ລາຍການທຽບ ເທົ່າເງິນສົດ		**(1, 876, 063, 523)**	**1, 412, 609, 299**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນໄລຍະ		7, 931, 767, 246	5, 320, 641, 096
(ຂາດທຶນ)/ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(89, 083, 063)	39, 470, 795
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍໄລຍະ	6	**5, 966, 620, 660**	**6, 772, 721, 190**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 12 ພະຈິກ 2026

ທ່ານ ຈ ຊຸນລິນ
ປະທານສະພາບໍລິຫານ

ວັນທີ: 12 ພະຈິກ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 6 ເຖິງ 14 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້.

1. ຂໍ້ມູນທົ່ວໄປ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ເປັນບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງໄດ້ດຳເນີນງານ ແລະ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈັດຕັ້ງ ແລະ ຈົດທະບຽນພາຍໃຕ້ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ, ລົງວັນທີ 30 ພະຈິກ 2017 ແລະ ໄດ້ມີການຕໍ່ໃບທະບຽນວິສາຫະກິດສະບັບໃໝ່, ລົງວັນທີ 26 ພຶດສະພາ 2022.

ບໍລິສັດຢູ່ພາຍໃຕ້ການຄຸ້ມຄອງຂອງ ບໍລິສັດ ພັດທະນາສຸມເສດຖະກິດການຄ້າຄົບວົງຈອນໝອງຈັນ ຕອນເໜືອ ຈຳກັດ ("NNCD") ເຊິ່ງເປັນບໍລິສັດແມ່ ໂດຍ ຖືຫຸ້ນໃນບໍລິສັດໃນອັດຕາສ່ວນ 65. 22% ໃນຂະນະທີ່ຫຸ້ນທີ່ເຫຼືອອີກ 34. 78% ເປັນຫຸ້ນທີ່ມີການຖືຄອງຢ່າງແຜ່ຫຼາຍ.

ໃນວັນທີ 30 ພະຈິກ 2017, NNCD ໄດ້ໂອນສິດການເຊົ່າຂອງອາຄານ ວຽງຈັນ ເຊັ້ນເຕີ ຊຶ່ງມີເນື້ອທີ່ລວມ 5, 908 ຕາແມັດ ໃຫ້ແກ່ບໍລິສັດ ເພື່ອນຳໃຊ້ໃນການພັດທະນາ ແລະ ບໍລິຫານຈັດການເປັນສູນການຄ້າ ແລະ ພື້ນທີ່ຫ້ອງການໃຫ້ເຊົ່າ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ເອກະສານລາຍງານການເງິນທີ່ບທວນຄືນ ສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນວັນທີ 12 ພະຈິກ 2026.

2. ພື້ນຖານກະກຽມ

ເອກະສານລາຍງານທາງການເງິນທີ່ບທວນຄືນໄດ້ຖືກຈັດກຽມສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ 2 ໃນບົດລາຍງານການເງິນປະຈຳປີສຳລັບປີສິ້ນສຸດວັນທີ 31 ທັນວາ 2025. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເຊັ່ນ: ໃບລາຍງານສະຖານະການເງິນ, ໃບລາຍງານລາຍຮັບ, ໃບລາຍງານການປ່ຽນແປງສ່ວນຂອງຜູ້ຖືຮຸ້ນ ແລະ ໃບລາຍງານກະແສເງິນສົດ) ແມ່ນຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລ່ຽງານການເງິນປະຈຳປີ ໂດຍປະຕິບັດຕາມລະບຽບການເປີດເຜີຍຂໍ້ມູນຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານທາງການເງິນສະບັບນີ້ ຄວນອ່ານຮ່ວມກັບບົດລາຍງານການເງິນປະຈຳປີສຳລັບປີສິ້ນສຸດວັນທີ 31 ທັນວາ 2025.

ອີງຕາມກົດໝາຍການບັນຊີ ເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງນຳໃຊ້ມາດຕະຖານການລາຍງານທາງການເງິນສາກົນ (IFRS). ຢ່າງໃດກໍຕາມ, ກະຊວງການເງິນໄດ້ອອກແຈ້ງການເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ເລກທີ 0009/LSCO ລົງວັນທີ 25 ພຶດສະພາ 2020, ເຊິ່ງໄດ້ໃຫ້ທາງເລືອກສຳລັບ PIEs ໃນການຈັດທຳແຜນປະຕິບັດງານສຳລັບການນຳໃຊ້ IFRS ຈົນເຖິງວັນທີ 31 ທັນວາ 2025. ສຳລັບຮອບໄລຍະບັນຊີທີ່ເລີ່ມຕົ້ນໃນ ຫຼື ຫຼັງວັນທີ 1 ມັງກອນ 2026 ເປັນຕົ້ນໄປ, ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດຕາມ IFRS ຢ່າງຄົບຖ້ວນ.

ໃນປັດຈຸບັນ, ຝ່າຍບໍລິຫານກຳລັງດຳເນີນການຂໍອະນຸຍາດຈາກໜ່ວຍງານກຳກັບດູແລທີ່ກ່ຽວຂ້ອງ ເພື່ອເລື່ອນການນຳໃຊ້ IFRS ອອກໄປ. ດັ່ງນັ້ນ, ຂໍ້ມູນທາງການເງິນທີ່ແນບມານີ້ ຈຶ່ງຍັງສືບຕໍ່ຈັດກຽມຕາມນະໂຍບາຍການບັນຊີທີ່ບໍລິສັດນຳໃຊ້ຢູ່ໃນປັດຈຸບັນ.

3. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີທີ່ໃຊ້ໃນການກະກຽມຂໍ້ມູນທາງການເງິນລະຫວ່າງການແມ່ນສອດຄ່ອງກັບນະໂຍບາຍທີ່ໃຊ້ໃນງົບການເງິນປະຈຳປີສຳລັບປີສິ້ນສຸດວັນທີ 31 ທັນວາ 2025. ຈຳນວນເງິນປຽບທຽບບາງຢ່າງໄດ້ຖືກຈັດປະເພດໃໝ່ເພື່ອໃຫ້ສອດຄ່ອງກັບການນຳສະເໜີໄລຍະເວລາປະຈຸບັນ, ດັ່ງທີ່ໄດ້ອະທິບາຍຊ້ອນທ້າຍ ຂໍ້ 4.

4. ການຈັດປະເພດຂໍ້ມູນປຽບທຽບຄືນໃໝ່

ໃນລະຫວ່າງໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດໄດ້ປັບປຸງການນຳສະເໜີລາຍການລາຍຮັບ ແລະ ລາຍຈ່າຍບາງຢ່າງເພື່ອສະທ້ອນເຖິງລັກສະນະ ແລະ ໜ້າທີ່ຂອງທຸລະກຳພື້ນຖານໃຫ້ດີຂຶ້ນ. ການນຳສະເໜີທີ່ໄດ້ຮັບການປັບປຸງໃຫ້ຂໍ້ມູນທີ່ຊັດເຈນ ແລະ ກ່ຽວຂ້ອງຫຼາຍຂຶ້ນກ່ຽວກັບຜົນງານທາງການເງິນຂອງບໍລິສັດ. ຈຳນວນເງິນປຽບທຽບສຳລັບໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2025 ໄດ້ຖືກຈັດປະເພດໃໝ່ເພື່ອໃຫ້ສອດຄ່ອງກັບການນຳສະເໜີໄລຍະເວລາປະຈຸບັນ.

ພາຍໃຕ້ການນຳສະເໜີກ່ອນໜ້ານີ້:

- ລາຍຮັບຈາກການເຊົ່າພື້ນທີ່ຈັດງານ ແລະ ລາຍຮັບດອກເບ້ຍໄດ້ຖືກລວມເຂົ້າໃນລາຍຮັບຈາກການດຳເນີນງານອື່ນໆ.
- ຄ່າໃຊ້ຈ່າຍໃນການໃຫ້ບໍລິການ, ຄ່າໃຊ້ຈ່າຍໃນການຂາຍ ແລະ ຄ່າໃຊ້ຈ່າຍໃນການບໍລິຫານໄດ້ຖືກນຳສະເໜີຮ່ວມກັນເປັນຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ການບໍລິຫານ.

ພາຍໃຕ້ການນຳສະເໜີທີ່ໄດ້ຮັບການປັບປຸງ:

- ລາຍຮັບຈາກການເຊົ່າພື້ນທີ່ຈັດງານ ແມ່ນລວມຢູ່ໃນລາຍຮັບຈາກການບໍລິການ.
- ລາຍຮັບດອກເບ້ຍຖືກນຳສະເໜີໃນລາຍຮັບອື່ນໆ.
- ຄ່າໃຊ້ຈ່າຍໃນການໃຫ້ບໍລິການ, ຄ່າໃຊ້ຈ່າຍໃນການຂາຍ ແລະ ຄ່າໃຊ້ຈ່າຍໃນການບໍລິຫານແມ່ນນຳສະເໜີແຍກຕ່າງຫາກຕາມໜ້າທີ່ຂອງມັນ.

ຜົນກະທົບຂອງການຈັດປະເພດໃໝ່ຕໍ່ງົບກຳໄລລວມລະຫວ່າງການສຳລັບໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2025 ມີດັ່ງນີ້:

ບົດລາຍງານຜົນໄດ້ຮັບຂອງໄຕມາດທີສາມທີ່ສິ້ນສຸດວັນທີ 30 ກັນຍາ 2025 (ຄັດຈ້ອນ)	**ການຈັດປະເພດຕາມລາຍງານຄັ້ງກ່ອນ ກີບ**	**ການຈັດປະເພດຄືນໃໝ່ ກີບ**	**ພາຍຫຼັງຈັດປະເພດຄືນໃໝ່ ກີບ**
ລາຍຮັບຈາກການບໍລິການ	5, 229, 914, 660	121, 940, 626	5, 351, 855, 286
ຕົ້ນທຶນຈາກການບໍລິການ	–	(997, 699, 138)	(997, 699, 138)
ກຳໄລຈາກການດຳເນີນງານ	**5, 229, 914, 660**	**(875, 758, 512)**	**4, 354, 156, 148**
ລາຍຮັບຈາກການດຳເນີນງານອື່ນໆ	126, 285, 072	(126, 285, 072)	–
ລາຍຮັບອື່ນໆ	–	4, 344, 446	4, 344, 446
ລາຍຈ່າຍບໍລິຫານ	–	(410, 985, 764)	(410, 985, 764)
ລາຍຈ່າຍໃນການຂາຍ	–	(1, 125, 000, 000)	(1, 125, 000, 000)
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	(2, 533, 684, 902)	2, 533, 684, 902	–

ການຈັດປະເພດໃໝ່ບໍ່ມີຜົນກະທົບຕໍ່ຍອດລວມຂອງຊັບສິນ, ໜີ້ສິນ, ສ່ວນຂອງເຈົ້າຂອງ, ກຳໄລກ່ອນຫັກອາກອນ, ກຳໄລສຸດທິ ຫຼື ກະແສເງິນສົດ.

5. ການຄາດຄະເນ

ການສ້າງເອກະສານລາຍງານການເງິນທວນຄືນ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ, ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລ່າຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການສ້າງເອກະສານລາຍງານການເງິນທວນຄືນ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ນະໂຍບາຍການບັນຊີຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານທາງການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025.

6. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນສົດໃນມື	-	-
ເງິນສົດໃນທະນາຄານ	5, 966, 620, 660	7, 558, 247, 285
	5, 966, 620, 660	**7, 558, 247, 285**

7. ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ

	ທີ່ບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ສາມ	941, 459, 112	1, 473, 310, 998
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(465, 225, 832)	(465, 225, 832)
	476, 233, 280	**1, 008, 085, 166**
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	10, 210, 017, 857	10, 643, 938, 454
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	2, 381, 328, 418	971, 295, 282
ໜີ້ຕ້ອງຮັບອື່ນໆ	592, 597, 220	-
	13, 660, 176, 775	**12, 623, 318, 902**

8. ຊັບສິນເພື່ອການລົງທຶນ, ສຸດທິ

	ກີບ
ວັນທີ 1 ມັງກອນ 2026 - ກວດສອບ	324, 424, 000, 000
ເພີ່ມຂຶ້ນ	4, 906, 743, 798
ກຳໄລ/(ຂາດທຶນ) ຈາກການຕີມູນຄ່າຄືນໃໝ່	-
ມູນຄ່າຍັງເຫຼືອຕາມບັນຊີສຸດທິ ໃນວັນທີ 30 ກັນຍາ 2026 - ທີ່ບທວນຄືນ	**329, 330, 743, 798**

9. ຊັບສິນບັດຄົງ ເຄື່ອງຈັກ ແລະ ອຸປະກອນ

	ກີບ
ວັນທີ 1 ມັງກອນ 2026 - ກວດສອບ	22, 969, 703
ເພີ່ມຂຶ້ນ	-
ຄ່າຫຼ້ຍຫ້ຽນ	(22, 969, 703)
ມູນຄ່າຍັງເຫຼືອຕາມບັນຊີສຸດທ ໃນວັນທ 30 ກັນຍາ 2026 - ທົບທວນຄືນ	-

10. ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ

	ທົບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ລາຍຮັບລ່ວງໜ້າຈາກຜູ້ເຊົ່າ	4, 494, 969, 589	6, 810, 304, 328
ເງິນມັດຈຳຈາກຜູ້ເຊົ່າ	5, 227, 046, 349	5, 260, 837, 771
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15. 2)	60, 001, 540	1, 215, 155, 811
ໜີ້ຕ້ອງສົ່ງອື່ນໆ	315, 996, 737	141, 574, 130
	10, 098, 014, 215	13, 427, 872, 040

11. ທຶນຈົດທະບຽນ

ບໍ່ມີການເຄື່ອນໄຫວຫຼຸດ ຫຼື ອອກຮຸ້ນເພີ່ມສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ກັນຍາ 2026.

12. ເງິນປັນຜົນ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 8 ພຶດສະພາ 2026, ຄະນະອຳນວຍການໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025 ຈຳນວນ 5 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 735, 999, 500 ກີບ. ເງິນປັນຜົນຖືກຈ່າຍໃນວັນທີ 28 ພຶດສະພາ 2026.

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 9 ເມສາ 2025, ຄະນະອຳນວຍການໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີ ຈາກກຳໄລສຸດທ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ຈຳນວນ 5 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 735, 999, 500 ກີບ. ເງິນປັນຜົນຖືກຈ່າຍໃນວັນທີ 28 ພຶດສະພາ 2025.

13. ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	ທົບທວນຄືນ 01 ມັຖລະກົດ - 30 ກັນຍາ 2026 ກີບ	ທົບທວນຄືນ 01 ມັຖລະກົດ - 30 ກັນຍາ 2025 ກີບ
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	-	103, 992, 663
ລາຍຈ່າຍອາກອນເຍື້ອນຊ້ຳລະ (13. 2)	528, 166, 165	577, 048, 211
ລວມລາຍຈ່າຍອາກອນພາຍໃນໄລຍະ	528, 166, 165	681, 040, 874

13. 1 ລາຍຈ່າຍອາກອນກຳໄລ

ບໍລິສັດມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% (2025: 20%) ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

ການຄິດໄລ່ຂອງອາກອນກຳໄລສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ກັນຍາ 2026 ແມ່ນມີດັ່ງຕໍ່ໄປນີ້:

	ທົບທວນຄືນ 01 ມັຖລະກົດ - 30 ກັນຍາ 2026 ກີບ	ທົບທວນຄືນ 01 ມັຖລະກົດ - 30 ກັນຍາ 2025 ກີບ
ກຳໄລກ່ອນອາກອນ	2, 812, 726, 269	3, 405, 204, 372
ຜົນກະທົບຈາກອາກອນ		
ຄ່າເສື່ອມລາຄາທີ່ຫັກໄດ້ທາງພາສີ	(2, 728, 373, 140)	(2, 670, 271, 397)
ລາຍຈ່າຍທີ່ບໍ່ສາມາດນຳມາຫັກພາສີໄດ້	93, 866, 665	-
ລາຍຮັບທີ່ບໍ່ສາມາດນຳມາເປັນລາຍຮັບທາງພາສີ	(6, 324, 350)	(214, 969, 658)
ພື້ນຖານກຳໄລກ່ອນອາກອນ ກ່ອນຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	171, 895, 444	519, 963, 317
ຂາດທຶນອາກອນຍົກຍອດໄປຫັກຕໍ່ (ບົດອະທິບາຍຂໍ້ 13. 3)*	(171, 895, 444)	-
ພື້ນຖານກຳໄລກ່ອນອາກອນ ຫຼັງຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	-	519, 963, 317
ອັດຕາອາກອນກຳໄລ	10%	20%
ລາຍຈ່າຍອາກອນກຳໄລ	-	103, 992, 663

* ໃນວັນທີ 30 ກັນຍາ 2025, ບໍລິສັດໄດ້ຮັບຮູ້ຄ່າໃຊ້ຈ່າຍພາສີລາຍໄດ້ໃນປະຈຸບັນໂດຍອີງໃສ່ກຳໄລທີ່ຕ້ອງເສຍພາສີລະຫວ່າງການ. ເມື່ອສຳເລັດການຄິດໄລ່ພາສີປະຈຳປີ 2025, ການສູນເສຍທາງພາສີໝົດປີໄດ້ຖືກສ້າງຕັ້ງຂຶ້ນ, ເຊິ່ງນຳໄປສູ່ການປັນກັບຄ່າໃຊ້ຈ່າຍພາສີທີ່ຮັບຮູ້ກ່ອນໜ້ານີ້ຢ່າງສົມບຸນ.

13. ລາຍຈ່າຍອາກອນກຳໄລ (ຕໍ່)

13.2 ໜີ້ອາກອນເຍື້ອນຊຳລະ

ການເຄື່ອນໄຫວລວມຂອງໜີ້ສິນອາກອນເຍື້ອນຊຳລະສຳລັບໄລຍະສິ້ນສຸດວັນທີ 30 ກັນຍາ ມີດັ່ງຕໍ່ໄປນີ້:

	2026 ກີບ	2025 ກີບ
ໃນວັນທີ 1 ກໍລະກົດ	40, 873, 535, 595	37, 964, 991, 400
ບັນທຶກເຂົ້າກຳໄລ ຫຼື ຂາດທຶນ	528, 166, 165	577, 048, 211
ໃນວັນທີ 30 ກັນຍາ	**41, 401, 701, 760**	**38, 542, 039, 611**

13.2 ໜີ້ອາກອນເຍື້ອນຊຳລະ (ຕໍ່)

ການເຄື່ອນໄຫວຂອງໜີ້ສິນອາກອນເຍື້ອນຊຳລະພາຍໃນປີ ແລະ ປີກ່ອນມີດັ່ງລຸ່ມນີ້:

	ໃນວັນທີ 01 ກໍລະກົດ 2026 ກີບ	ບັນທຶກ ເຂົ້າກຳໄລ ຫຼື ຂາດທຶນ ກີບ	ໃນວັນທີ 30 ກັນຍາ 2026 ກີບ
ຄ່າເສື່ອມມູນຄ່າຈາກການປະເມີນມູນຄ່າ ຊັບສິນ			
ການລົງທຶນ	16, 740, 427, 629	545, 674, 628	17, 286, 102, 257
ກຳໄລ ຈາກການຕີມູນຄ່າຄືນໃໝ່	23, 918, 402, 721	-	23, 918, 402, 721
ອື່ນໆ*	214, 705, 245	(17, 508, 463)	197, 196, 782
	40, 873, 535, 595	**528, 166, 165**	**41, 401, 701, 760**

* ສ່ວນໃຫຍ່ແມ່ນມາຈາກກຳໄລ/ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ.

13.3 ຂາດທຶນອາກອນຍົກຍອດໄປຫັກຕໍ່

ອີງຕາມກົດໝາຍອາກອນສະບັບແກ້ໄຂເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ທີ່ມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020, ມາດຕາ 23, ຜູ້ດຳເນີນທຸລະກິດ ທີ່ເສຍອາກອນກຳໄລຕາມລະບົບການຖືບັນຊີທີ່ມີການຂາດທຶນໃນ ປີ ໂດຍມີການຢັ້ງຢືນຈາກອົງການການກວດສອບບັນຊີ ຫຼື ບໍລິສັດກວດສອບບັນຊີເອກະລາດ ແລະ ໄດ້ມີການຮັບຮູ້ຈາກ ຂະແໜງສ່ວຍສາອາກອນ ມີສິດຍົກເງິນຂາດທຶນດັ່ງກ່າວ ໄປຫັກອອກຈາກກຳໄລຂອງປີຖັດໄປ ພາຍໃນເວລາຫ້າປີ. ໃນວັນ ທີ 30 ກັນຍາ 2026, ບໍລິສັດມີຂາດທຶນອາກອນຍົກຍອດໄປຫັກຕໍ່ສະສົມລວມທີ່ສາມາດຫັກລົບກັບກຳໄລທາງອາກອນ ໃນອະນາຄົດດັ່ງລາຍລະອຽດລຸ່ມນີ້:

ປີເລີ່ມຕົ້ນ	ສາມາດໃຊ້ໄດ້ ເຖິງ	ຂາດທຶນອາກອນ ກີບ	ນຳໃຊ້ສະສົມເຖິງ 30 ກັນຍາ 2026 ກີບ	ເສຍສິດ ກີບ	ຍັງບໍ່ໄດ້ນຳໃຊ້ໃນວັນທີ 30 ກັນຍາ 2026 ກີບ
2021*	2026	4, 275, 760, 240	(1, 273, 160, 171)	-	3, 002, 600, 069
		4, 275, 760, 240	**(1, 273, 160, 171)**	**-**	**3, 002, 600, 069**

*ຂາດທຶນອາກອນຍົກຍອດໄປຫັກຕໍ່ສຳລັບປີສິ້ນສຸດ 31 ທັນວາ 2021 ໄດ້ຖືກປະເມີນຈາກຂະແໜງສ່ວຍສາອາກອນ ໃນວັນທີ 27 ມັງກອນ 2023.

14. ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງກຳໄລສຸດທິໃຫ້ຜູ້ຖືຮຸ້ນ ດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ່ອອກພາຍໃນໄລຍະ.

	ທີ່ບທວນຄືນ 01 ກໍລະກົດ – 30 ກັນຍາ 2026 ກີບ	ທີ່ບທວນຄືນ 01 ກໍລະກົດ - 30 ກັນຍາ 2025 ກີບ
ກຳໄລ ສຸດທິຂອງຜູ້ຖືຮຸ້ນ (ກີບ)	2, 284, 560, 104	2, 724, 163, 498
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັ້ງໝົດ (ຮຸ້ນ)	147, 199, 900	147, 199, 900
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	15. 52	18. 51

15. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງ ບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນເຫຼົ່ານັ້ນ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນດັ່ງຕໍ່ໄປນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

15.1. ການຊື້ບໍລິການ

	ທີ່ບທວນຄືນ 01 ກໍລະກົດ - 30 ກັນຍາ 2026 ກີບ	ທີ່ບທວນຄືນ 01 ກໍລະກົດ - 30 ກັນຍາ 2025 ກີບ
ຊື້ບໍລິການຈາກ:		
ບໍລິສັດແມ່		
- ຄ່າບໍລິຫານຈັດການ	1, 125, 000, 000	1, 125, 000, 000
- ຄ່າບຳລຸງຮັກສາ	984, 341, 438	849, 791, 987
- ຄ່າເຊົ່າພື້ນທີ່ຈອດລົດ	142, 322, 648	-
- ຄ່າເຊົ່າປ້າຍໂຄສະນາ	176, 381, 515	-

15. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

15.2. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ບໍລິການ

	ທີ່ບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບທາງການຄ້າ:		
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 7)	10, 210, 017, 857	10, 643, 938, 454
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 7)	2, 381, 328, 418	971, 295, 282
ໜີ້ຕ້ອງສົ່ງທາງການຄ້າ:		
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 10)	60, 001, 540	1, 215, 155, 811
ຊັບສິນໝຸນວຽນອື່ນໆ:		
ຈ່າຍລ່ວງໜ້າຄ່າເຊົ່າພື້ນທີ່ຈອດລົດ ແລະ ປ້າຍໂຄສະນາ	318, 704, 163	-

16. ພາລະຜູກພັນ

ຜູ້ໃຫ້ເຊົ່າ

ບໍລິສັດໄດ້ໃຫ້ເຊົ່າພື້ນທີ່ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳ ໃນອະນາຄົດ ນະວັນທີ 30 ກັນຍາ 2026 ແລະ 31 ທັນວາ 2025 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	ທີ່ບທວນຄືນ 30 ກັນຍາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຕ່ຳກວ່າ 1 ປີ	6, 202, 634, 956	5, 623, 055, 176
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	2, 749, 414, 175	6, 265, 683, 366
	8, 952, 049, 131	11, 888, 738, 542

ພາລະຜູກພັນພາຍໃຕ້ສັນຍາຮ່ວມມືທຸລະກິດ

ບໍລິສັດໄດ້ເຊັນສັນຍາໃນການຮ່ວມມືທຸລະກິດ ເຊິ່ງໃນນັ້ນລາຍຮັບຈາກການດຳເນີນງານຂອງໂຮງໜັງ ທີ່ຖືກກຳນົດໃນອັດຕາຄົງທີ່ໄວ້ ໃນສັນຍາດັ່ງກ່າວ ຄູ່ຮ່ວມທຸລະກິດເຊິ່ງເປັນຜູ້ເຊົ່າ ຕ້ອງແບ່ງລາຍຮັບຈາກລາຍໄດ້ຂອງໂຮງໜັງໃຫ້ແກ່ບໍລິສັດ ນັບຈາກ ທັນວາ 2017 ຫາ ສິງຫາ 2035 ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

(i) ແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ໃນອັດຕາ 12% ແລະ (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະຂອງທີ່ລະນຶກ ໃນອັດຕາ 15%. ໃນລະຫວ່າງ 1 ກຸມພາ 2024 ຫາ 31 ຕຸລາ 2026, ທາງຜູ້ບໍລິຫານໄດ້ເຫັນດີຫຼຸດເປີເຊັນຂອງ ການແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ຈາກ 12% ເປັນ 8% ແລະ (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະຂອງທີ່ລະນຶກຈາກ 15% ເປັນ 10%.

ບໍລິສັດບໍ່ມີສິດຍົກເລີກສັນຍາຮ່ວມມືທຸລະກິດກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງໂດຍຜູ້ ເຊົ່າ; ຫຼື (ii) ມີເຫດສຸດວິໄສ; ຫຼື (iii) ຝ່າຍໃດຝ່າຍໜຶ່ງຍື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້.

17. ເຫດການທີ່ເກີດຂຶ້ນຫຼັງວັນທີ່ເອກະສານລາຍງານທາງການເງິນ

ບໍ່ມີເຫດການສາລະສຳຄັນ ເກີດຂຶ້ນຫຼັງຈາກວັນທີ່ເອກະສານລາຍງານການເງິນ ທີ່ມີຜົນກະທົບຕໍ່ຕົວເລກໃນຂໍ້ມູນການເງິນຂອງ ບໍລິສັດ.